## • ທີ່ຕັ້ງ ແລະ ພາລະບົດບາດຂອງ ທລຍ

ກອງທຶນຫຼຸດຜ່ອນຄວາມທຸກຍາກ ຊື່ເອີ້ນຫຍໍ້ວ່າ “ທລຍ” ແມ່ນການຈັດຕັ້ງໜຶ່ງພາຍໃຕ້ຄວາມພະຍາຍາມຂອງລັດຖະບານ ເພື່ອໃຫ້ເປັນໂຄງການລິເລີ່ມຂອງລັດຖະບານເພື່ອປະກອບສ່ວນເຂົ້າໃນວຽກງານລຶບລ້າງຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ ຈົນກ້າວເຖິງການຫຼຸດພົ້ນອອກຈາກຄວາມທຸກຍາກໃນຂອບເຂດທົ່ວປະເທດ ທັງເປັນການຜັນຂະຫຍາຍມະຕິຂອງພັກ ແລະ ລັດຖະບານ ໂດຍການກະຈາຍອຳນາດລົງສູ່ທ້ອງຖິ່ນ ເປັນຕົ້ນແມ່ນການມີສ່ວນຮ່ວມຂອງປະຊາຊົນໃນການຕັດສິນໃຈຕໍ່ການພັດທະນາຢູ່ທ້ອງຖິ່ນຂອງເຂົາເຈົ້າ, ທັງເປັນການປະຕິບັດພັນທະສາກົນຂອງຕົນໃນການປະກອບສ່ວນເຂົ້າ ໃນການຈັດຕັ້ງປະຕິບັດຄາດໝາຍສະຫັດສະຫວັດ ເພື່ອການພັດທະນາໃນປີ 2015, ພ້ອມທັງປະກອບເຂົ້າໃນວຽກງານ“ຍຸດທະສາດການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ”ເພື່ອເຮັດໃຫ້ປະເທດເຮົາຫຼຸດພົ້ນອອກຈາກສະພາບປະເທດດ້ອຍພັດທະນາ ໃນປີ 2020.

ກອງທຶນຫຼຸດຜ່ອນຄວາມທຸກຍາກ ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 73/ນຍ, ສະບັບລົງວັນທີ 31 ພຶດສະພາ 2002, ອີງຕາມດຳລັດດັ່ງກ່າວແຕ່ປີ 2003 ຫາ 2006 ທລຍ ເປັນອົງການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງແຜນການ ແລະ ການລົງທຶນ ເພື່ອປະກອບສ່ວນເຂົ້າໃນວຽກງານລຶບລ້າງຄວາມທຸກຍາກ ຕາມກອງປະຊຸມໃຫຍ່ຄັ້ງທີ VII ຂອງສູນກາງພັກ, ຈາກນັ້ນ ໄດ້ມີການດັດແກ້ມາເປັນດຳລັດ ເລກທີ 222/ນຍ ລົງວັນທີ 29 ກັນຍາ 2006 ແລະ ທລຍ 2 ໄດ້ອີງໃສ່ດຳລັດເລກທີ 10/ນຍ, ລົງວັນທີ 10 ມັງກອນ 2012, ອີງຕາມດຳລັດທີ່ໄດ້ດັດແກ້ດັ່ງກ່າວ, ແຕ່ປີ 2007 ຫາ 2016, ທລຍ ເປັນອົງການຈັດຕັ້ງໜຶ່ງທີ່ຂຶ້ນກັບຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ມີຫ້ອງການສູນກາງຢູ່ສຳນັກງານນາຍົກລັດຖະມົນຕີ ແລະ ທລຍ ໄລຍະທີ 3 ແມ່ນອີງຕາມດຳລັດ ເລກທີ 99/ນຍ (ລົງວັນທີ 9 ມີນາ 2017) ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້, ທລຍ ເປັນກົມຈັກທຽບເທົ່າ... 

## • ພື້ນທີ່ການເຄື່ອນໄຫວວຽກງານ ທລຍ

ທລຍ ໄລຍະ 1: ປີ 2003-2011 (8 ປີ)ໄດ້ເຄື່ອນໄຫວວຽກງານຢູ່ 8 ແຂວງ (ຫຼວງນ້ຳທາ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ,ຈຳປາສັກ, ເຊກອງ ແລະ ອັດຕະປື, ສະເພາະ ແຂວງອັດຕະປືແມ່ນ ເຂົ້າປີ 2011), 28 ເມືອງທຸກຍາກ, 309 ກຸ່ມບ້ານ, 2.185 ບ້ານ ແລະ ກວມເອົາປະຊາກອນຫຼາຍກວ່າ 909.000 ກວ່າຄົນ.

ທລຍ ໄລຍະທີ 2: ແຕ່ປີ 2012-2016 (5 ປີ) ໄດ້ກວມເອົາ 10 ແຂວງ, 42 ເມືອງທຸກຍາກ, 278 ກຸ່ມບ້ານ 1.951 ບ້ານ ແລະ ກວມເອົາປະຊາກອນ ຫຼາຍກວ່າ 891.000 ຄົນ. ແຂວງຈຳປາສັກ ໄດ້ຖືກ ຖອນອອກໃນປີ 2011 ແລະ ເພີ້ມແຂວງ ອຸດົມໄຊ, ຫຼວງພະບາງ ແລະ ຜົ້ງສາລີເຂົ້າຕື່ມໃນປີ 2012.

ທລຍ ໄລຍະ 3: ແຕ່ປີ 2017-2020 (4 ປີ) ໄດ້ກວມເອົາພື້ນທີ່ເປົ້າໝາຍ 10 ແຂວງ, 43 ເມືອງ, 263 ກຸ່ມບ້ານ, 1.820 ບ້ານ ແລະ ກວມເອົາປະຊາກອນຫຼາຍກວ່າ 850.000 ຄົນ.

ສະຫຼຸບລວມ: ປີ 2003 - 2020 ທລຍ ໄດ້ເຄື່ອນໄຫວວຽກງານທັງໝົດຢູ່ 11 ແຂວງຄື: ແຂວງຫຼວງນ້ຳທາ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ,ຈຳປາສັກ, ເຊກອງ, ອັດຕະປື, ອຸດົມໄຊ, ຜົ້ງສາລີ ແລະ ແຂວງຫຼວງພະບາງ. ກວມເອົາ 2.841 ບ້ານ, 413 ກຸ່ມບ້ານ, 55 ເມືອງ, ມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 1.3 ລ້ານຄົນ

ທລຍ 3 ໄລຍະທຶນເພີ່ມຕື່ມ: 2020-2024 (4 ປີ) ໄດ້ກວມເອົາ 12 ເມືອງ, 465 ບ້ານ, 4 ແຂວງ (ຜົ້ງສາລີ, ຫົວພັນ, ອຸດົມໄຊ ແລະ ຊຽງຂວາງ)


**ຄະນະຮັບຜິດຊອບ**

ທ່ານ ນາງ ບົວລີ ໄຊຍະວົງ

ທ່ານ ທົງເງິນ ສະເດັດຕັນ

ທ່ານ ສົມສັກ ຈັນດາລາ

ທ່ານ ແສງເພັດ ວັນນະວົງ

ທ່ານ ປອ. ທັດທະຈັນ ພົມພັນທະວົງ

**ຄະນະບັນນາທິການ**

ທ່ານ ພັດນະຄອນ ຄັນທະມີໄຊ

ທ່ານ ປອ. ວົງປະພັນ ມະນີວົງ

**ອອກແບບ ແລະ ຈັດໜ້າ**

ທ່ານ ແສງອາລຸນ ພິລາຈັນ



**ຕິດຕໍ່ ແລະ ຕິດຕາມພວກເຮົາໄດ້ທີ່:**

ໂທ: 021 261 479 - 80, ອີເມວ: **info@prf.org**

ເວບໄຊ: **www.prflaos.org,** ເຟສບຸກ: **Prf Fund**


THE WORLD BANK
IBRD • IDA

# ກອງທຶນຫຼຸດຜ່ອນຄວາມທຸກຍາກ
# ຈົດໝາຍຂ່າວ

ປະຈຳໄຕມາດ

ກໍລະກົດ - ກັນຍາ
2022

**ມາຈາກຄວາມຕ້ອງການຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ**

## ສາລະບານ


ການລ້ຽງໝູ ເພື່ອແກ້ໄຂຄວາມທຸກຍາກ ຂອງສະມາຊິກ ກຊກ ບ້ານນາສາມ
ໜ້າທີ 1-2

ການສ້າງລາຍຮັບຈາກການລ້ຽງແບ້ ຂອງສະມາຊິກ ກຊກ ຢູ່ບ້ານສິ້ນຂົວ
ໜ້າທີ 3

ກອງທຶນຫຼຸດຜ່ອນຄວາມທຸກຍາກ ຂັ້ນສູນກາງ ເອົາໃຈໃສ່ວຽກງານຢູ່ທ້ອງຖິ່ນຮາກຖານ
ໜ້າທີ 4-5

ກຸ່ມໂພຊະນາການ ບ້ານນາອໍ້ ປູກຖົ່ວຂຽວ ເພື່ອໂພຊະນາການ
ໜ້າທີ 6

ຄອບຄົວຕົວແບບ ສະມາຊິກ ກຊກ ບ້ານນາຫວາຍ ກັບການລ້ຽງປາ ສ້າງລາຍຮັບໃຫ້ແກ່ຄອບຄົວ
ໜ້າທີ 7

ກອງປະຊຸມທົບທວນຄືນການຈັດຕັ້ງປະຕິບັດໂຄງການ ທລຍ ຢູ່ບ້ານເປົ້າໝາຍຊຸດທີ 1 ແລະ ວາງແຜນສໍາລັບບ້ານເປົ້າໝາຍຊຸດທີ 2 ຢູ່ເມືອງບຸນໃຕ້
ໜ້າທີ 8

ບ້ານປຸງ ກັບການລ້ຽງສັດປີກ ສ້າງລາຍຮັບເພື່ອແກ້ໄຂຄວາມທຸກຍາກ
ໜ້າທີ 9

ສາທິດປຸງແຕ່ງອາຫານເສີມໃຫ້ເດັກ ຢູ່ບ້ານເປົ້າໝາຍ ທລຍ ເມືອງກ້ອນ, ແຂວງຫົວພັນ
ໜ້າທີ 10

ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດໂຄງການ ທລຍ ຢູ່ບ້ານເປົ້າໝາຍຊຸດທີ 1 ແລະ ວາງແຜນສໍາລັບບ້ານເປົ້າໝາຍຊຸດທີ 2 ຢູ່ເມືອງກວັນ
ໜ້າທີ 11




## ການລ້ຽງໝູ ເພື່ອແກ້ໄຂຄວາມທຸກຍາກ ຂອງສະມາຊິກ ກຊກ ບ້ານນາສາມ


ໂດຍ: ສົມທະນູ ມະນີຈັນ, ວິຊາການປັບປຸງຊີວິດການເປັນຢູ່ຂັ້ນບ້ານ, ທລຍ ເມືອງຫົວເມືອງ


ບ້ານນາສາມ ເປັນບ້ານຊົນເຜົ່າກຶມມຸ ທີ່ຂຶ້ນກັບເມືອງຫົວເມືອງ, ແຂວງຫົວພັນ ຕັ້ງຢູ່ຫ່າງຈາກເທດສະບານເມືອງ 30 ກິໂລແມັດ. ບ້ານນາສາມ ປະກອບມີທັງໝົດ 27 ຄົວເຮືອນ, , ໃນນັ້ນມີ 25 ຄົວເຮືອນທຸກຍາກ, ມີພົນລະເມືອງທັງໝົດ 185 ຄົນ, ຍິງ 83 ຄົນ. ບ້ານດັ່ງກ່າວ ມີເນື້ອທີ່ທໍາການຜະລິດ 25 ເຮັກຕາ, ອາຊີບຫຼັກຂອງປະຊາຊົນພາຍໃນບ້ານ ແມ່ນເຮັດນາ, ເຮັດໄຮ່ເຂົ້າ ສ່ວນການປູກພືດ ແລະ ລ້ຽງສັດ ເປັນອາຊີບສໍາຮອງ. ບ້ານນາສາມ ເປັນບ້ານເປົ້າໝາຍຂອງໂຄງການ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ໂດຍໄດ້ຮັບການສະໜັບ ສະໜູນກິດຈະກໍາປັບປຸງຊີວິດການເປັນຢູ່ ມາແຕ່ປີ 2020. ໜຶ່ງໃນບັນດາກິດຈະກໍາແກ້ໄຂຄວາມທຸກຍາກພາຍໃນບ້ານ ແມ່ນການສ້າງຕັ້ງ ກຸ່ມຊ່ວຍເຫຼືອກັນແກ້ໄຂຄວາມທຸກຍາກ (ກຊກ) ຊຶ່ງບ້ານດັ່ງກ່າວ ໄດ້ສ້າງຕັ້ງກຸ່ມ ກຊກ ທັງໝົດ 2 ກຸ່ມ ແລະ ມີສະມາຊິກເຂົ້າຮ່ວມທັງໝົດ 25 ຄົນ, ຍິງ 25 ຄົນ. ໂຄງການ ທລຍ ໄດ້ສະໜອງເງິນຕົ້ນທຶນໃຫ້ ກຊກ ທັງໝົດ 27,600,000 ກີບ ແລະ ນອກຈາກນັ້ນ ຄະນະກໍາມະການບໍລິຫານກອງທຶນ ກຊກ (ຄບກ) ຂັ້ນບ້ານ ຍັງໄດ້ຕິດຕາມເປັນປົກກະຕິ ໃນການຝາກເງິນປະຈໍາເດືອນຂອງສະມາຊິກ ກຊກ ແລະ ໄດ້ກໍານົດເອົາທຸກໆ ວັນທີ 5 ຂອງເດືອນ ເປັນ

ມື້ຝາກເງິນຂອງສະມາຊິກ ກຊກ ພາຍໃນບ້ານ. ສະມາຊິກ ກຊກ ທັງໝົດພາຍໃນບ້ານ ເຫັນດີເປັນເອກະພາບຕົກລົງກັນ ຝາກເງິນເດືອນລະ 10,000 ກີບ ຕໍ່ຄົນຕໍ່ເດືອນ ຊຶ່ງມາຮອດບັນຈຸບັນ ເງິນຝາກຂອງສະມາຊິກ ກຊກ ມີທັງໝົດ 4,750,000 ກີບ.

ນອກຈາກ ການສະໜອງເງິນຕົ້ນທຶນແລ້ວ ໂຄງການ ທລຍ ຍັງໄດ້ຈັດຝຶກອົບຮົມທາງດ້ານເຕັກນິກ-ວິຊາການ ການລ້ຽງສັດ ອີງຕາມປະເພດສັດລ້ຽງທີ່ຄັດເລືອກໂດຍສະມາຊິກ ກຊກ ແລະ ການຂຽນແຜນທຸລະກິດສ້າງລາຍຮັບຂອງຄົວເຮືອນ ເພື່ອສະເໜີໄປຍັງ ຄບກ ບ້ານ ພິຈາລະນາອະນຸມັດການກູ້ຢືມເງິນ. ໃນໄລຍະຜ່ານມາ ຄບກ ບ້ານນາສາມ ໄດ້ປ່ອຍເງິນກູ້ຈາກ ເງິນຕົ້ນທຶນ ໃຫ້ສະມາຊິກ ກຊກ ຈຳນວນ 15 ຄົນ ກູ້ຢືມເປັນເງິນທັງໝົດ 27 ລ້ານ ກີບ ເພື່ອລ້ຽງໝູ ໂດຍສົມທົບກັບເງິນຂອງ ຄອບຄົວຕົນເອງ. ມາຮອດປະຈຸບັນ ສະມາຊິກ ກຊກ ຜູ້ທີ່ໄດ້ກູ້ຢືມເງິນມາລ້ຽງໝູ ສາມາດສ້າງລາຍຮັບເພີ່ມໃຫ້ແກ່ຄອບຄົວ ຈາກການຂາຍໝູ. ພິເສດໄດ້ມີສະມາຊິກ ກຊກ ຜູ້ລ້ຽງໝູ ທີ່ເປັນຄອບຄົວຕົວແບບ 1 ຄອບຄົວ ຄື: ຄອບຄົວ ນາງ ພອນ ຊຶ່ງນັບຕັ້ງແຕ່ເດືອນພະຈິກ ປີ 2021 ມາຮອດປະຈຸບັນ ຄອບຄົວ ນາງ ພອນ ສາມາດຂາຍໝູ ໄດ້ທັງໝົດ 11,625,000 ກີບ ແລະ ພາຍຫຼັງ ສົ່ງເງິນກູ້ ຈຳນວນ 2 ລ້ານກີບ ແລ້ວ, ຄອບຄົວ ນາງ ພອນ ຍັງມີລາຍຮັບເຫຼືອ 9,6 ລ້ານ ກີບ ແລະ ຍັງມີໝູແມ່ພັນເຫຼືອໄວ້ອີກຈຳນວນໜຶ່ງ.



ການສ້າງລາຍຮັບຈາກການລ້ຽງແບ້ ຂອງສະມາຊິກ ກຊກ ຢູ່ບ້ານສີ້ນຂີວ

ໂດຍ: ພູນຕາວັນ ອິນທຽມວົງ, ຫົວໜ້າທີມງານ ທລຍ ເມືອງຫົວເມືອງ

ບບ້ານນາສາມ ເປັນບ້ານຊົນເຜົ່າກຶມມຸ ທີ່ຂຶ້ນກັບເມືອງ ຫົວເມືອງ, ແຂວງຫົວພັນ ຕັ້ງຢູ່ຫ່າງຈາກເທດສະບານເມືອງ 30 ກິໂລແມັດ. ບ້ານນາສາມ ປະກອບມີທັງໝົດ 27 ຄົວເຮືອນ, , ໃນນັ້ນມີ 25 ຄົວເຮືອນທຸກຍາກ, ມີພົນລະເມືອງທັງໝົດ 185 ຄົນ, ຍິງ 83 ຄົນ. ບ້ານດັ່ງກ່າວ ມີເນື້ອທີ່ທຳການຜະລິດ 25 ເຮັກຕາ, ອາຊີບຫຼັກຂອງປະຊາຊົນພາຍໃນບ້ານ ແມ່ນເຮັດນາ, ເຮັດໄຮ່ເຂົ້າ ສ່ວນການປູກພືດ ແລະ ລ້ຽງສັດ ເປັນອາຊີບສຳຮອງ.

ບ້ານນາສາມ ເປັນບ້ານເປົ້າໝາຍຂອງໂຄງການ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ໂດຍໄດ້ຮັບການສະໜັບສະໜູນກິດຈະກຳປັບປຸງຊີວິດການເປັນຢູ່ ມາແຕ່ປີ 2020. ໜຶ່ງໃນບັນດາກິດຈະກຳແກ້ໄຂຄວາມທຸກຍາກພາຍໃນບ້ານ ແມ່ນການສ້າງຕັ້ງ ກຸ່ມຊ່ວຍເຫຼືອກັນແກ້ໄຂຄວາມທຸກຍາກ (ກຊກ) ຊຶ່ງບ້ານດັ່ງກ່າວ ໄດ້ສ້າງຕັ້ງກຸ່ມ ກຊກ ທັງໝົດ 2 ກຸ່ມ ແລະ ມີສະມາຊິກເຂົ້າຮ່ວມທັງໝົດ 25 ຄົນ, ຍິງ 25 ຄົນ. ໂຄງການ ທລຍ ໄດ້ສະໜອງເງິນຕົ້ນທຶນໃຫ້ ກຊກ ທັງໝົດ 27,600,000 ກີບ ແລະ ນອກຈາກນັ້ນ ຄະນະກຳມະການບໍລິຫານກອງທຶນ ກຊກ (ຄບກ) ຂັ້ນບ້ານ ຍັງໄດ້ຕິດຕາມເປັນປົກກະຕິ ໃນການຝາກເງິນປະຈຳເດືອນຂອງສະມາຊິກ ກຊກ ແລະ ໄດ້ກຳນົດເອົາທຸກໆ ວັນທີ 5 ຂອງເດືອນ ເປັນມື້ຝາກເງິນຂອງສະມາຊິກ ກຊກ ພາຍໃນບ້ານ. ສະມາຊິກ ກຊກ ທັງໝົດພາຍໃນບ້ານ ເຫັນດີເປັນເອກະພາບຕົກລົງກັນ ຝາກເງິນເດືອນລະ 10,000 ກີບ ຕໍ່ຄົນຕໍ່ເດືອນ ຊຶ່ງມາຮອດບັນຈຸບັນ ເງິນຝາກຂອງສະມາຊິກ ກຊກ ມີທັງໝົດ 4,750,000 ກີບ.

ນອກຈາກ ການສະໜອງເງິນຕົ້ນທຶນແລ້ວ ໂຄງການ



ທລຍ ຍັງໄດ້ຈັດຝຶກອົບຮົມທາງດ້ານເຕັກນິກ-ວິຊາການ ການລ້ຽງສັດ ອີງຕາມປະເພດສັດລ້ຽງທີ່ຄັດເລືອກໂດຍສະມາຊິກ ກຊກ ແລະ ການຂຽນແຜນທຸລະກິດສ້າງລາຍຮັບຂອງຄົວເຮືອນ ເພື່ອສະເໜີໄປຍັງ ຄບກ ບ້ານ ພິຈາລະນາອະນຸມັດການກູ້ຢືມເງິນ. ໃນໄລຍະຜ່ານມາ ຄບກ ບ້ານນາສາມ ໄດ້ປ່ອຍເງິນກູ້ຈາກ ເງິນຕົ້ນທຶນ ໃຫ້ສະມາຊິກ ກຊກ ຈຳນວນ 15 ຄົນ ກູ້ຢືມເປັນເງິນທັງໝົດ 27 ລ້ານ ກີບ ເພື່ອລ້ຽງໝູ ໂດຍສົມທົບກັບເງິນຂອງ ຄອບຄົວຕົນເອງ. ມາຮອດປະຈຸບັນ ສະມາຊິກ ກຊກ ຜູ້ທີ່ໄດ້ກູ້ຢືມເງິນມາລ້ຽງໝູ ສາມາດສ້າງລາຍຮັບເພີ້ມໃຫ້ແກ່ຄອບຄົວ ຈາກການຂາຍໝູ. ພິເສດ ໄດ້ມີສະມາຊິກ ກຊກ ຜູ້ລ້ຽງໝູ ທີ່ເປັນຄອບຄົວຕົວແບບ 1 ຄອບຄົວ ຄື: ຄອບຄົວ ນາງ ພອນ ຊຶ່ງນັບຕັ້ງແຕ່ເດືອນພະຈິກ ປີ 2021 ມາຮອດປະຈຸບັນ ຄອບຄົວ ນາງ ພອນ ສາມາດຂາຍໝູ ໄດ້ທັງໝົດ 11,625,000 ກີບ ແລະ ພາຍຫຼັງ ສົ່ງເງິນກູ້ ຈຳນວນ 2 ລ້ານ ກີບ ແລ້ວ, ຄອບຄົວ ນາງ ພອນ ຍັງມີລາຍຮັບເຫຼືອ 9,6 ລ້ານ ກີບ ແລະ ຍັງມີແມ່ພັນເຫຼືອໄວ້ອີກຈຳນວນໜຶ່ງ.

# ກອງທຶນຫຼຸດຜ່ອນຄວາມທຸກຍາກ ຂັ້ນສູນກາງ ເອົາໃຈໃສ່ວຽກງານຢູ່ທ້ອງຖິ່ນຮາກຖານ

**ໂດຍ: ພູນຕາວັນ ອິນທຽມວົງ, ຫົວໜ້າທີມງານ ທລຍ ເມືອງຫົວເມືອງ**

ໃນວັນທີ 8 ສິງຫາ 2022 ຜ່ານມາ, ທ່ານ ພັດນະຄອນ ຄັນທະມີໄຊ, ຜູ້ອໍານວຍການ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ໄດ້ລົງຕິດຕາມ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ ຢູ່ເຂດພື້ນທີ່ເປົ້າໝາຍ ເມືອງຫົວເມືອງ ແຂວງຫົວພັນ ຂອງໂຄງການ ທລຍ. ຈຸດປະສົງຂອງການລົງຕິດຕາມ ຊຸກຍູ້ວຽກງານໃນຄັ້ງນີ້ແມ່ນເພື່ອ: 1) ພົບປະກັບອໍານາດການປົກຄອງຂັ້ນທ້ອງຖິ່ນ ໂດຍສະເພາະຜູ້ຊີ້ນໍາວຽກງານ ທລຍ ຂັ້ນເມືອງ, ຜູ້ປະສານງານ ທລຍ ຝ່າຍລັດຂັ້ນເມືອງ; 2) ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດວຽກງານ ໂຄງການ ທລຍ ຢູ່ເມືອງຫົວເມືອງ ແລະ ເມືອງຊ່ອນ; ແລະ 3) ຢ້ຽມຢາມການຈັດຕັ້ງປະຕິບັດວຽກງານຂອງໂຄງການຍ່ອຍ, ວຽກງານປັບປຸງຊີວິດການເປັນຢູ່ ແລະ ວຽກງານໂພຊະນາການ ຢູ່ບ້ານເປົ້າໝາຍຂອງໂຄງການ ທລຍ.

ໃຫ້ກຽດຕ້ອນຮັບການລົງຕິດຕາມ ຊຸກຍູ້ວຽກງານໃນຄັ້ງນີ້ ໂດຍທ່ານ ສົມແອງ ສຸກດາວົງ, ຮອງເຈົ້າເມືອງ ເມືອງຫົວເມືອງ ຜູ້ຊີ້ນໍາວຽກງານ ທລຍ ຂັ້ນເມືອງ ແລະ ຜູ້ປະສານງານ ທລຍ ຝ່າຍລັດຂັ້ນເມືອງ, ຫົວໜ້າທີມງານຂັ້ນເມືອງ ພ້ອມດ້ວຍພະນັກງານ ທລຍ ເມືອງ ແລະ ບ້ານ ລວມທັງໝົດ 23 ຄົນ, ຍິງ 10 ຄົນ ຊຶ່ງໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງໂຄງການ ທລຍ ຢູ່ເມືອງຫົວເມືອງ ແລະ ເມືອງຊ່ອນ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ ພ້ອມທັງ ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ ແລະ ຂໍ້ສະເໜີ.

ໃນຕອນບ່າຍຂອງວັນດຽວກັນ ຜູ້ອໍານວຍການ ທລຍ ຍັງໄດ້ລົງຢ້ຽມຢາມກິດຈະກໍາປັບປຸງຊີວິດການເປັນຢູ່ ຢູ່ບ້ານຫົວທົ່ວຊຽງ ໂດຍໄດ້ຮັບການຕ້ອນຮັບຈາກອໍານາດການປົກຄອງບ້ານ, ສະມາຊິກ ກຸ່ມຊ່ວຍເຫຼືອກັນ (ກຊກ) ແລະ ສະມາຊິກ ກຸ່ມໂພຊະນາການ (ກພກ); ໄດ້ຮັບຟັງ



ການລາຍງານການຈັດຕັ້ງປະຕິບັດວຽກງານ ທລຍ ຈາກຄະນະບໍລິຫານ ກຊກ ບ້ານຫົວຊຽງ ຊຶ່ງບ້ານດັ່ງກ່າວ ມີ ກຊກ 8 ກຸ່ມ, ມີສະມາຊິກທັງໝົດ 90 ຄົນ, ຍິງ 88 ຄົນ ແລະ ມີຄະນະຄຸ້ມຄອງກອງທຶນບ້ານ (ຄບກ) ຈຳນວນ 6 ທ່ານ, ຍິງ 5 ທ່ານ. ມາຮອດປະຈຸບັນ ມີເງິນຝາກທັງໝົດ 31.590.000 ກີບ, ໄດ້ປ່ອຍກູ້ໃຫ້ສະມາຊິກທັງໝົດ 25.000.000 ກີບ. ນອກຈາກນັ້ນ, ກຸ່ມ ກຊກ ຍັງໄດ້ຮັບເງິນສະໜັບສະໜຸນຈາກໂຄງການ ທລຍ ເພື່ອເປັນທຶນໝູນວຽນຂອງບ້ານຈຳນວນ 99.360.000 ກີບ ແລະ ໄດ້ປ່ອຍກູ້ໃຫ້ສະມາຊິກ ຈຳນວນ 99.000.000 ກີບ ເພື່ອໄປເຮັດກິດຈະກຳສ້າງລາຍຮັບ, ມີສະມາຊິກກູ້ຢືມທັງໝົດ 65 ຄົນ, ຍິງ 64 ຄົນ.

ຜ່ານການເຮັດກິດຈະກຳສ້າງລາຍຮັບ ສາມາດສ້າງຕົວແບບໄດ້ 4 ຄອບຄົວ ຄື: ລ້ຽງໝູ 2 ຄອບຄົວ, ລ້ຽງປາ 1 ຄອບຄົວ ແລະ ສວນພັກເຮືອນຮົ່ມ 1 ຄອບຄົວ. ພິເສດ ໄດ້ລົງຢ້ຽມຄອບຄົວ ທ່ານ ພອນສະໄໝ ຄອບຄົວຕົວແບບ ດ້ານການປູກຝັງ ແລະ ລ້ຽງສັດ ເພື່ອເປັນສິນຄ້າ ໂດຍຄອບຄົວດັ່ງກ່າວມີສະມາຊິກ ທັງໝົດ 6 ຄົນ, ຍິງ 3 ຄົນ, ມີແຮງງານຕົ້ນຕໍ 4 ຄົນ, ມີເນື້ອທີ່ນາທັງໝົດ 1 ຮຕ, ສະມັດຕະພາບເຂົ້າໄດ້ 4.8 ໂຕນ/ຮຕ, ມີສັດລ້ຽງປະເພດງົວ, ຄວາຍທັງໝົດ 35 ໂຕ, ໝູ 30 ໂຕ, ສັດປີກ 150 ໂຕ, ມີສວນຫຍ້າເພື່ອລ້ຽງສັດ 2 ບ່ອນ ເນື້ອທີ່ 14 ຮຕ. ໃນແຕ່ລະປີ ຄອບຄົວ ທ່ານ ພອນສະໄໝ ສາມາດສ້າງລາຍຮັບຈາກການຂາຍສັດ ປະມານ 50-60 ລ້ານກີບ.

ໃນຕອນທ້າຍຂອງການລົງຕິດຕາມ ຊຸກຍູ້ວຽກງານໃນຄັ້ງນີ້ ທ່ານ ຜູ້ອຳນວຍການ ທລຍ ໄດ້ເນັ້ນໜັກບັນດາຄອບຄົວຕົວແບບ ໃຫ້ຮັກສາມູນເຊື້ອດຸໝັ່ນ, ຄວາມຮູ້ຄວາມສາມາດໃນການສ້າງລາຍຮັບໃຫ້ແກ່ຄອບຄົວ ແລະ ສະເໜີໃຫ້ຖ່າຍທອດບົດຮຽນ, ຄວາມຮູ້ ແລະ ປະສົບການ ໃຫ້ແກ່ຄອບຄົວອື່ນໆ ພາຍໃນບ້ານ ແລະ ບ້ານອື່ນໆ ຢູ່ພາຍໃນເມືອງ.





## ກຸ່ມ ໂພຊະນາການ ບ້ານນາອໍ້ ປູກຖົ່ວຂຽວ ເພື່ອໂພຊະນາການ

**ໂດຍ: ນິຄໍາ ບຸນເລີງທອງ, ຫົວໜ້າທີມ ທລຍ ເມືອງກວັນ, ແຂວງຫົວພັນ**

ບ້ານນາອໍ້ ເປັນບ້ານຊົນເຜົ່າລາວລຸ່ມ ທີ່ຂຶ້ນກັບເມືອງກວັນ, ແຂວງຫົວພັນ, ມີໄລຍະທາງຫ່າງຈາກເທດສະບານເມືອງ 15 ກິໂລແມັດ; ມີ 50 ຫຼັງຄາ, 63 ຄົວເຮືອນ, ພົນລະເມືອງທັງໝົດ 303 ຄົນ, ຍິງ 151 ຄົນ; ໃນນັ້ນມີຄອບຄົວທຸກຍາກ 5 ຄອບຄົວ, ມີຈໍານວນພົນ 27 ຄົນ, ຍິງ 14 ຄົນ; ອາຊີບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນເຮັດນາ, ເຮັດໄຮ່, ປູກກາເຟ, ຕໍ່າຫູກ ແລະ ລ້ຽງສັດ; ປະຊາຊົນພາຍໃນບ້ານມີລາຍຮັບສະເລ່ຍ 4.000.000 ກີບຕໍ່ຄົນຕໍ່ປີ.

ໃນປີ 2020-2022 ບ້ານດັ່ງກ່າວ ໄດ້ສ້າງຕັ້ງກຸ່ມ ໂພຊະນາການ (ກພກ) 1 ກຸ່ມ, ມີສະມາຊິກກຸ່ມທັງໝົດ 39 ຄົນ, ຍິງ 27 ຄົນ, ໄດ້ຮັບເງິນສະໜັບສະໜຸນຈາກໂຄງການ ທລຍ ທັງໝົດ 3.072.000 ກີບ ສໍາລັບແຕ່ງອາຫານເສີມໃຫ້ແມ່ຍິງຖືພາ, ແມ່ລູກອ່ອນ, ເດັກອາຍຸ 6-23 ເດືອນ ຊຸດທີ 1 ໄລຍະ 6 ເດືອນ ແລະ ນອກຈາກນັ້ນ ຍັງມີເງິນຊຸມຊົນປະກອບສ່ວນ 816.000 ກີບ. ສະມາຊິກ ກພກ ບ້ານນາອໍ້ ໄດ້ຮັບຝຶກອົບຮົມ ສ້າງສວນຄົວ, ເຮັດສູດຢາຂັບໄລ່ແມງໄມ້, ປູກພືດໄຮ່ ຈາກອົງການ CLICK ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ໂດຍການສະໜັບສະໜູນຈາກ ໂຄງການ ທລຍ. ຫຼັງຈາກໄດ້ຄວາມຮູ້ຈາກການຝຶກອົບຮົມແລ້ວ ສະມາຊິກ ກພກ ບ້ານດັ່ງກ່າວ ໄດ້ທົດລອງປູກຖົ່ວຂຽວ ຕາມຫຼັກສູດ ແລະ ຄວາມຮູ້ທີ່ໄດ້ຮຽນມາໃນເນື້ອທີ່ປະມານ 50 ຕາແມັດ ດ້ວຍແນວປູກ 2 ກິໂລກະລາມ ແລະ ຕໍ່ມາສາມາດເກັບກູ້ຜົນຜະລິດໄດ້ທັງໝົດ 40 ກິໂລກະລາມ. ຖົ່ວຂຽວທີ່ເກັບໄດ້ນັ້ນ ແມ່ນເອົາມາຕາກແຫ້ງ ແລ້ວເອົາມາຂົ້ວຕາມປະລິມານ ແລະ ບົດປະສົມໃສ່ເຂົ້າຈ້າວ ເພື່ອແຕ່ງເປັນອາຫານເສີມໃຫ້ເດັກອາຍຸ 6-23 ເດືອນ ກິນ ເພື່ອໃຫ້ໄດ້ຮັບສານອາຫານພຽງພໍ ແລະ ຫຼຸດຕົ້ນທຶນຈາກການຊື້ຖົ່ວຂຽວຢູ່ໃນທ້ອງຕະຫຼາດ. ໃນຕໍ່ໜ້າ ກຸ່ມ ກພກ ບ້ານອໍ້ ຈະຂະຫຍາຍເນື້ອທີ່ປູກຖົ່ວຂຽວ ໃຫ້ຫຼາຍຂຶ້ນ ເພື່ອສາມາດສະໜອງໃຫ້ແກ່ການແຕ່ງອາຫານເສີມໃຫ້ເດັກ 6-23 ເດືອນ ໄດ້ຢ່າງພຽງພໍ.

# ຄອບຄົວຕົວແບບ ສະມາຊິກ ກຊກ ບ້ານນາຫວາຍ ກັບການລ້ຽງປາ ສ້າງລາຍຮັບໃຫ້ແກ່ຄອບຄົວ

ໂດຍ: ວິໄລ ແກ້ວອິ່ນຄຳ, ທລຍ ເມືອງ ບຸນໃຕ້ ແຂວງ ຜົ້ງສາລີ

ການປູກຝັງ-ລ້ຽງສັດ ເປັນອາຊີບໜຶ່ງທີ່ສ້າງຜົນປະໂຫຍດໃຫ້ທັງຜູ້ຜະລິດ ແລະ ຜູ້ບໍລິໂພກພາຍໃນສັງຄົມ. ການຜະລິດກະສິກຳ ນອກຈາກຈະສາມາດສະໜອງສະບຽງອາຫານໃຫ້ແກ່ຄອບຄົວແລ້ວ ຍັງເປັນຊ່ອງທາງໜຶ່ງໃນການສ້າງລາຍຮັບເຂົ້າສູ່ຄອບຄົວ ແລະ ກ້າວໄປສູ່ການຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ.

ນາງ ອິ່ນຄຳ, ອາຍຸ 30 ປີ ປະຊາຊົນ ຢູ່ບ້ານນາຫວາຍ ເມືອງບຸນໃຕ້ ແຂວງຜົ້ງສາລີ ໄດ້ໃຫ້ສຳພາດວ່າ: ຄອບຄົວຂອງຕົນມີສະມາຊິກທັງໝົດ 3 ຄົນ: ຜົວ, ເມຍ ແລະ ລູກ 1 ຄົນ ມີອາຊີບ ເປັນຊາວນາ ຊຶ່ງສາມາດປູກເຂົ້າໄດ້ປີລະ 1 ໂຕນ, ມີຊີວິດການເປັນຢູ່ໃນເມື່ອກ່ອນ ແບບພໍແຕ່ກຸ້ມກິນ, ການດຳລົງຊີວິດມີຄວາມລຳບາກຫຼາຍສົມຄວນ, ການມີແຕ່ລາຍໄດ້ຈາກການຂາຍເຂົ້າ ແລະ ສັດປີກຈຳນວນໜຶ່ງ ແມ່ນບໍ່ພຽງພໍກັບລາຍຈ່າຍ.

ໃນປີ 2020 ໂຄງການ ກອງທຶນຫລຸດຜ່ອນຄວາມທຸກຍາກ (ທຸລຍ) 3 ໄລຍະເພີ່ມທຶນ ຂອງກະຊວງກະສິກຳ ແລະ ປ່າໄມ້ ປະຈຳເມືອງບຸນໃຕ້, ແຂວງຜົ້ງສາລີ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໄດ້ຈັດຕັ້ງກຸ່ມຊ່ວຍເຫຼືອກັນແກ້ໄຂຄວາມທຸກຍາກ(ກຊກ) ຢູ່ບ້ານນາຫວາຍ ຈຳນວນ 3 ກຸ່ມ, ມີຊະມາຊິກທັງໝົດ 26 ຄົນ, ຍິງ 10 ຄົນ ໃນນັ້ນ ນາງ ອິ່ນຄຳ ເປັນສະມາຊິກ ກຸ່ມ 2 ຄື: ກຸ່ມຈະເລີນຮັ່ງມີ. ໃນຕົ້ນປີ 2021 ໂຄງການ ທລຍ ໄດ້ມອບເງິນຕົ້ນທຶນ ໃຫ້ກຸ່ມ ກຊກ ບ້ານນາຫວາຍ ຈຳນວນທັງໝົດ 28,704,000 ກີບ ໂດຍຜ່ານບັນຊີທະນາຄານທຸລະກິດ ປະຈຳເມືອງ ທີ່ມີຄະນະບໍລິຫານ ກຊກ ຂັ້ນບ້ານ ເປັນຜູ້ຄຸ້ມຄອງ ແລະ ບໍລິຫານ. ເງິນຕົ້ນທຶນຈຳນວນດັ່ງກ່າວ ໃຊ້ເປັນທຶນກູ້ຢືມໂດຍສົມທົບກັບເງິນຝາກຂອງສະມາຊິກເພື່ອປ່ອຍກູ້ໃຫ້ສະມາຊິກ ກຊກ. ສະມາຊິກ ກຸ່ມ ກຊກ ຜູ້ທີ່ຈະກູ້ຢືມເງິນຈາກກອງທຶນດັ່ງກ່າວ ຕ້ອງໄດ້ເຂົ້າຮ່ວມການຝຶກອົບຮົມດ້ານເຕັກນິກ-ວິຊາການ ຈາກນັກວິຊາການຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຕົ້ນແມ່ນເຕັກນິກວິຊາການປູກຝັງ-ລ້ຽງສັດ-ສັດຕະວະແພດ ເພື່ອຮັບປະກັນການນຳໃຊ້ທຶນກູ້ຢືມ ຢ່າງມີປະສິດທິພາບ.

ໃນວັນທີ 12 ເດືອນຕຸລາ ປີ 2021 ນາງ ອິ່ນຄຳ ໄດ້ຂຽນແຜນທຸລະກິດຄົວເຮືອນກ່ຽວກັບການລ້ຽງປາ ແລະ ໃບສະເໜີ ຂໍກູ້ຢືມເງິນຈາກກອງທຶນ ກຊກ ແລະ ຫຼັງຈາກຄະນະຄຸ້ມຄອງບໍລິຫານກອງທຶນ ກຊກ (ຄບກ) ໄດ້ພິຈາລະນາອະນຸມັດເງິນກູ້ໃຫ້ຜູ້ກ່ຽວ ຈຳນວນ 5,000,000 ກີບ, ໄລຍະການກູ້ຢືມແມ່ນ 8 ເດືອນ. ໂດຍສົມທົບກັບທຶນຮອນຂອງຜູ້ກ່ຽວຈຳນວນໜຶ່ງ ນາງ ອິ່ນຄຳ ໄດ້ຊື້ແນວພັນປານິນນ້ອຍ ຈຳນວນ 20,000 ໂຕ ແລະ ທີ່ວອາຫານຈຳນວນໜຶ່ງ ເພື່ອເລີ້ມກິດຈະກຳລ້ຽງປາ.

ຫຼັງຈາກລ້ຽງປາໄດ້ 5-6 ເດືອນ ໂດຍການນຳໃຊ້ເຕັກນິກການລ້ຽງປາ ທີ່ໄດ້ຝຶກອົບຮົມນຳ ຈາກວິຊາການລ້ຽງສັດຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເຫັນວ່າ ປານິນ ມີການຈະເລີນເຕີບໂຕດີ ແລະ ນາງ ອິ່ນຄຳ ໄດ້ຂາຍປານິນໄດ້ທັງໝົດ 1,500 ກິໂລກລາມ (ລາຄາຂາຍປານິນ 25,000 ກີບຕໍ່ກິໂລກລາມ) ລວມເປັນເງິນທັງໝົດ 37,500,000 ກີບ. ເມື່ອສົ່ງເງິນຄືນເງິນກູ້ທີ່ຢືມຈາກກອງທຶນ ກຊກ ຈຳນວນ 5 ລ້ານກີບແລ້ວ ນາງ ອິ່ນຄຳ ມີລາຍຮັບ 32,500,000 ກີບ ແລະ ຍັງມີປາຈຳນວນໜຶ່ງທີ່ຍັງສືບຕໍ່ລ້ຽງ ແລະ ຈະສາມາດສ້າງລາຍໄດ້ຕື່ມອີກໃນຕໍ່ໜ້າ.

ນອກຈາກນີ້ ນາງ ອິ່ນຄຳ ຍັງໄດ້ເຂົ້າຮ່ວມການຝາກເງິນໃນກອງທຶນ ກຊກ ເປັນປົກກະຕິ ເຊິ່ງມາຮອດປັດຈຸບັນລາວມີເງິນຝາກປະຫຍັດຢູ່ໃນບັນຊີ ກຊກ ຈຳນວນໜຶ່ງ. ທ່ານ ນາງ ອິ່ນຄຳ ຍັງກ່າວຕື່ມວ່າ: ຜ່ານການເຂົ້າຮ່ວມເປັນສະມາຊິກ ກຊກ, ການຝຶກອົບຮົມເຕັກນິກການປູກຝັງ-ລ້ຽງສັດ ເຮັດໃຫ້ລາວ ມີຄວາມຮູ້, ປະສົບການ ແລະ ສາມາດເຂົ້າເຖິງແຫຼ່ງທຶນໄດ້. ລາວໄດ້ເອົາລາຍຮັບໃນການຂາຍປານິນຊຸດທີ່ຜ່ານມາ ໄປບຸກເບີກໜອງປາຕື່ມອີກ ເຮັດໃຫ້ຊີວິດການເປັນຢູ່ທີ່ເຄີຍຫຍຸ້ງຍາກໃນເມື່ອກ່ອນ ດີຂຶ້ນກວ່າເກົ່າ.



# ກອງປະຊຸມທົບທວນຄືນການຈັດຕັ້ງປະຕິບັດໂຄງການ ທລຍ ຢູ່ບ້ານເປົ້າໝາຍຊຸດທີ 1 ແລະ ວາງແຜນສຳລັບບ້ານເປົ້າໝາຍຊຸດທີ 2 ຢູ່ເມືອງບຸນໃຕ້

ໂດຍ: ວິໄລ ແກ້ວອິ່ນຄຳ, ຫົວໜ້າທີມງານ ທລຍ ເມືອງບຸນໃຕ້



ໃນຕອນເຊົ້າຂອງວັນທີ 12 ເດືອນກັນຍາ 2022 ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ປະຈຳເມືອງບຸນໃຕ້, ແຂວງຜົ້ງສາລີ ໄດ້ຈັດກອງປະຊຸມທົບທວນຄືນການຈັດຕັ້ງປະຕິບັດວຽກງານ ໂຄງການ ທລຍ ຢູ່ບ້ານເປົ້າໝາຍຊຸດທີ 1 ແລະ ວາງແຜນສໍາລັບບ້ານເປົ້າໝາຍຊຸດທີ 2 ຂຶ້ນທີ່ສະໂມສອນໃຫຍ່ຂອງເມືອງ ໂດຍການເປັນປະທານຂອງທ່ານ ບຸນແພງ ລາວລີ, ຮອງເຈົ້າເມືອງເມືອງບຸນໃຕ້, ຜູ້ຊີ້ນຳວຽກງານ ທລຍ ຂັ້ນເມືອງ ແລະ ການເຂົ້າຮ່ວມຂອງ ທ່ານ ຖາວອນ ໄຊຍະບຸດ, ຜູ້ຊ່ວຍຜູ້ປະສານງານໂຄງການ ທລຍ ປະຈຳແຂວງຜົ້ງສາລີ, ບັນດາທ່ານຫົວໜ້າ-ຮອງຫົວໜ້າຫ້ອງການຈາກຂະແໜງການທີ່ກ່ຽວຂ້ອງ, ຜູ້ປະສານງານໂຄງການ ທລຍ ຂັ້ນເມືອງ, ຕະຫຼອດຮອດພະນັກງານ ທລຍ ຂັ້ນເມືອງ ແລະ ຂັ້ນບ້ານ ເຂົ້າຮ່ວມທັງໝົດ 30 ທ່ານ, ຍິງ 8 ທ່ານ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ ແມ່ນເພື່ອສະຫຼຸບຜົນຂອງການຈັດຕັ້ງປະຕິບັດວຽກງານຂອງໂຄງການ ທລຍ ຢູ່ບ້ານເປົ້າໝາຍຊຸດທີ 1 ແລະ ນຳສະເໜີແຜນການເຄື່ອນໄຫວວຽກງານຂອງໂຄງການ ທລຍ ຢູ່ບ້ານເປົ້າໝາຍຊຸດທີ 2.

ໃນກອງປະຊຸມ ທ່ານ ບຸນແພງ ລາວລີ, ຮອງເຈົ້າເມືອງເມືອງບຸນໃຕ້ ໄດ້ໃຫ້ກຽດມີຄຳເຫັນ ພ້ອມທັງກ່າວເປີດກອງປະຊຸມຢ່າງເປັນທາງການ. ຈາກນັ້ນ ທ່ານ ວິໄລ ແກ້ວອິ່ນຄຳ, ຫົວໜ້າທີມງານ ທລຍ ເມືອງບຸນໃຕ້ ໄດ້ຂຶ້ນລາຍງານຫຍໍ້ກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ທລຍ ຢູ່ບ້ານເປົ້າໝາຍຊຸດທີ 1 ໃນໄລຍະຜ່ານມາ. ກອງປະຊຸມຍັງໄດ້ຮັບຟັງການແນະນຳໂຄງການ ທລຍ ຊຶ່ງປະກອບມີປະຫວັດຄວາມເປັນມາຂອງໂຄງການ, ຈຸດປະສົງຂອງໂຄງການ, ແຫຼ່ງທຶນ, ໂຄງຮ່າງການຈັດຕັ້ງ, ວິທີການຈັດຕັ້ງປະຕິບັດໂຄງການໃນຮູບແບບຊຸມຊົນເປັນເຈົ້າ, 6ຫຼັກການພື້ນຖານໃນການຈັດຕັ້ງປະຕິບັດໂຄງການ, ພື້ນທີ່ເປົ້າໝາຍ, ກິດຈະກຳແຕ່ລະອົງປະກອບ, ກອບວຽກງານປ້ອງກັນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ, ໂຕຊີ້ວັດຂອງໂຄງການ ແລະ ແຜນຈັດຕັ້ງປະຕິບັດວຽກໃນຕໍ່ໜ້າ. ຈາກນັ້ນກອງປະຊຸມໄດ້ຮັບຮອງເອົາບ້ານເປົ້າໝາຍຂອງໂຄງການໄລຍະທີ 02 ຈຳນວນ 15 ບ້ານ ຄື: ໂພທອງ, ບຸນຍອງ, ຊີໄຊ, ໂນນບູນກາງ, ຈາທໍ່, ຫາດເສັດ, ຜົ້ງກູ້ນ້ຳກ້ວາງ, ຈາຫຼວງໃໝ່, ບໍ່ຫາດ+ຈາຫວ່າງ, ຈາຄຳແດງ, ຈາຄຳຊາວ, ມູຕືນ, ອາຢາ, ສະໂນໃໝ່ ແລະ ກ່າວສານ.

ໃນຕອນທ້າຍ ຂອງກອງປະຊຸມ ທ່ານ ບຸນແພງ ລາວລີ ໄດ້ກ່າວສະແດງຄວາມຍ້ອງຍໍຊົມເຊີຍມາຍັງຜູ້ປະສານງານໂຄງການ ທລຍ ຕະຫຼອດຮອດພະນັກງານ ທລຍ ຂັ້ນເມືອງ ແລະ ຂັ້ນບ້ານ ທີ່ໄດ້ພ້ອມກັນຈັດຕັ້ງປະຕິບັດບັນດາກິດຈະກຳຢູ່ຂັ້ນຮາກຖານບ້ານ ໂດຍແນໃສ່ຈັດຕັ້ງປະຕິບັດຕາມຄຳຂວັນຂອງ ທລຍ ທີ່ວ່າ: "ລົງຮາກຖານ ສ້າງບ້ານພົ້ນທຸກ ຊຸກຍູ້ໂພຊະນາການ ສ້າງຮາກຖານລາຍຮັບ ປັບປຸງຊີວິດການເປັນຢູ່ ສູ້ຊົນສ້າງຕົວແບບ" ແລະ ໄດ້ເນັ້ນໜັກໃຫ້ພະນັກງານໂຄງການ ທລຍ ແລະ ຂະແໜງການທີ່ກ່ຽວຂ້ອງ ຈົ່ງສືບຕໍ່ຈັດຕັ້ງປະຕິບັດວຽກງານ ທລຍ ຢູ່ບັນດາບ້ານເປົ້າໝາຍຊຸດທີ 2 ຂອງໂຄງການ ໃຫ້ສຳເລັດຕາມແຜນການທີ່ວາງໄວ້.

## ບ້ານປຸງ ກັບການລ້ຽງສັດປີກ ສ້າງລາຍຮັບເພື່ອແກ້ໄຂຄວາມທຸກຍາກ

**ໂດຍ: ແກ້ວມະນີ ສັກທິເດດ, ພະນັກງານປັບປຸງຊີວິດການເປັນຢູ່ຂັ້ນບ້ານ, ເມືອງໃໝ່, ແຂວງຜົ້ງສາລີ**

ໃນວັນທີ 13 ກັນຍາ 2022 ຜ່ານມາ, ພະນັກງານປັບປຸງຊີວິດຂັ້ນບ້ານ ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ເມືອງໃໝ່, ແຂວງຜົ້ງສາລີ ໄດ້ລົງຕິດຕາມຊຸກຍູ້ການຝາກເງິນ, ການລົງບັນຊີ, ການຄຸ້ມຄອງກອງທຶນ ແລະ ກິດຈະກໍາສ້າງລາຍຮັບຂອງສະມາຊິກ ກຸ່ມຊ່ວຍເຫຼືອກັນແກ້ໄຂຄວາມທຸກຍາກ (ກຊກ) ຢູ່ບ້ານປຸງ, ເມືອງໃໝ່.

ຄອບຄົວ ນາງ ສອນ ແມ່ນຄອບຄົວໜຶ່ງທີ່ອາໃສຢູ່ບ້ານດັ່ງກ່າວ, ມີສະມາຊິກໃນຄອບຄົວທັງໝົດ 5 ຄົນ, ຍິງ 4 ຄົນ, ມີແຮງງານຕົ້ນຕໍ 3 ຄົນ, ແຮງງານສໍາຮອງ 2 ຄົນ. ນາງ ສອນ ໄດ້ເຂົ້າເປັນສະມາຊິກ ກຊກ ແຕ່ປີ 2020 ແລະ ໄດ້ຮັບການຝຶກອົບຮົມເຕັກນິກວິຊາການ ການລ້ຽງສັດປີກ ແລະ ການລ້ຽງແບ້ ຈາກຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ໂດຍສະໜັບສະໜູນຈາກໂຄງການ ທລຍ.

ພາຍຫຼັງໄດ້ຮັບການຝຶກອົບຮົມ ນາງ ສອນ ໄດ້ມີຄວາມຮູ້ຄວາມສາມາດຫຼາຍຂຶ້ນ ໂດຍໄດ້ຮູ້ຈັກການລ້ຽງສັດແບບຖືກເຕັກນິກວິຊາການ ໂດຍໄດ້ເຮັດທົ່ວອາຫານປະສົມ, ອາຫານໝັກ ເພື່ອຫຼຸດຜ່ອນຕົ້ນທຶນຈາກການນໍາໃຊ້ທົ່ວອາຫານ ແລະ ຍັງຮຽນຮູ້ເຕັກນິກການສັກວັກຊີນປ້ອງກັນພະຍາດສັດປີກ. ນອກຈາກນັ້ນ, ນາງ ສອນ ໄດ້ກູ້ຢືມເງິນຕົ້ນທຶນ 2.000.000 ກີບ ມາສົມທົບໃສ່ເງິນທີ່ມີຢູ່ໃນຄອບຄົວ ຈໍານວນໜຶ່ງ ລົງທຶນໃສ່ການລ້ຽງເປັດໄກ່ ໂດຍໄດ້ຊື້ພໍ່ແມ່ພັນ ເປັດ 5 ໂຕ ແລະ ໄກ່ 7 ໂຕ ມາລ້ຽງສົມທົບກັບສັດປີກຈໍານວນໜຶ່ງທີ່ມີຢູ່ແລ້ວ.

ຫຼັງຈາກລ້ຽງເປັດໄກ່ ມາໄດ້ເວລາ 8 ເດືອນ ນາງ ສອນ ສາມາດສ້າງລາຍຮັບຈາກການຂາຍໄກ່ ຈໍານວນ 1.500.000 ກີບ (ຂາຍໄກ່ 30 ໂຕ, ໂຕລະ 50.000 ກີບ). ນອກຈາກນັ້ນ, ຄອບຄົວ ນາງ ສອນ ຍັງມີພໍ່ແມ່ພັນເປັດ 34 ໂຕ, ໄກ່ 50 ໂຕ ເຫຼືອໄວ້ເປັນຕົ້ນທຶນ ໃນການສ້າງລາຍຮັບໃນອະນາຄົດ. ພິເສດຄອບຄົວ ນາງ ສອນ ຍັງໄດ້ເຂົ້າຮ່ວມການຝາກເງິນໃນກອງທຶນ ກຊກ ເປັນປົກກະຕິໃນທຸກໆເດືອນ.





## ສາທິດປຸງແຕ່ງອາຫານເສີມໃຫ້ເດັກ ຢູ່ບ້ານເປົ້າໝາຍ ທລຍ ເມືອງກ້ອນ, ແຂວງຫົວພັນ

**ໂດຍ: ລ່ງນ ມາໄລທອງ, ໂພຊະນາການຂັ້ນບ້ານ, ທລຍ ເມືອງກອນ**

ໃນວັນທີ 1 ກັນຍາ 2022, ກຸ່ມໂພຊະນາການບ້ານກໍໄຮ, ເມືອງກ້ອນ, ແຂວງຫົວພັນ ໄດ້ເຮັດສາທິດນໍາພາການປຸ່ງແຕ່ງອາຫານເສີມ ໃຫ້ກຸ່ມແມ່ຍິງຖືພາ 7 ຄົນ, ເດັກອາຍຸ 0-5 ເດືອນ 3 ຄົນ, ແມ່ລູກອ່ອນ 3 ຄົນ, ເດັກອາຍຸ 6-23 ເດືອນ 24 ຄົນ ແລະ ຜູ້ດູແລເດັກ. ການສາທິດປຸງແຕ່ງອາຫານໃນຄັ້ງນີ້ ແມ່ນໄດ້ຕົ້ມເຂົ້າປຽກຕາມສູດທີ 7 ໂດຍມີສ່ວນປະກອບຄື: ແປ້ງບົດ (ເຮັດມາຈາກເຂົ້າຈ້າວ ແລະ ຖົ່ວຂຽວ) ຜູ້ລະ 50 ກະລາມ, ນົມຈືດ ຜູ້ລະ 125 ມິນລີລິດ ແລະ ໝາກຟັກຄໍາ ຜູ້ລະ 40 ກະລາມ ຊຶ່ງສູດອາຫານນີ້ ຈະຊ່ວຍເຮັດໃຫ້ເດັກ ໄດ້ຮັບອາຫານທີ່ມີໂພຊະນາການ ແລະ ມີສຸຂະພາບແຂງແຮງ. ການສາທິດປຸງແຕ່ງອາຫານເສີມໃຫ້ກຸ່ມເປົ້າໝາຍ ໃນຮູບແບບດັ່ງກ່າວນີ້ ແມ່ນໄດ້ປະຕິບັດຢ່າງຕໍ່ເນື່ອງ 1 ຄັ້ງຕໍ່ອາທິດ ຢູ່ບ້ານດັ່ງກ່າວ ຊ່ວຍໃຫ້ຜູ້ເປັນແມ່ ແລະ ຜູ້ດູແລເດັກ ໄດ້ຮຽນຮູ້ ຂັ້ນຕອນ ແລະ ວິທີການປຸງແຕ່ງອາຫານໃນແຕ່ລະໄລຍະ. ຈຶ່ງ ໃຫ້ເກີດດອກອອກຜົນຢ່າງເປັນຮູບປະທໍາ.




## ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດໂຄງການ ທລຍ ຢູ່ບ້ານເປົ້າໝາຍຊຸດທີ 1 ແລະ ວາງແຜນ ສໍາລັບບ້ານເປົ້າໝາຍຊຸດທີ 2 ຢູ່ເມືອງກວັນ

**ໂດຍ: ນິຄໍາ ບຸນເລີງທອງ, ຫົວໜ້າທີມ ທລຍ ເມືອງກວັນ, ແຂວງຫົວພັນ**

ໃນຕອນເຊົ້າຂອງວັນທີ 6 ກັນຍາ 2022 ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ເມືອງກວັນ, ແຂວງຫົວພັນ ໄດ້ຈັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດໂຄງການ ທລຍ ຢູ່ບ້ານເປົ້າໝາຍຊຸດທີ 1 ແລະ ວາງແຜນສໍາລັບບ້ານເປົ້າໝາຍຊຸດທີ 2 ຂຶ້ນທີ່ຫ້ອງປະຊຸມ ກຸ່ມຫ້ອງການເສດຖະກິດເມືອງກວັນ ພາຍໃຕ້ການເປັນປະທານຂອງ ທ່ານໄມແປ້ນ ພອນທະລາ, ຄະນະປະຈໍາພັກເມືອງ, ຮອງເຈົ້າເມືອງ-ເມືອງກວັນ ແລະ ເປັນກຽດເຂົ້າຮ່ວມຂອງ ທ່ານ ຄື່ນ ທຸມມາລາ, ຮອງຫົວໜ້າພະແນກກະສິກໍາ ແລະ ປ່າໄມ້ ແຂວງຫົວພັນ ແລະ ມີບັນດາທ່ານຫົວໜ້າຫ້ອງການກ່ຽວຂ້ອງຂັ້ນເມືອງ, ທີມງານ ທລຍ ຂັ້ນເມືອງ ແລະ ທລຍ ຂັ້ນບ້ານ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ ທ່ານ ນິຄໍາ ບຸນເລີງທອງ, ຫົວໜ້າຫ້ອງການ ທລຍ ເມືອງກວັນ ໄດ້ຂຶ້ນຜ່ານບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຂອງໂຄງການ ທລຍ ໃນໄລຍະຜ່ານມາ ແລະ ທິດທາງໃນຕໍ່ໜ້າ ຊຶ່ງໄດ້ຍົກໃຫ້ເຫັນການຈັດຕັ້ງປະຕິບັດວຽກງານຢູ່ບ້ານເປົ້າໝາຍຊຸດທີ 1 ຊຶ່ງມີທັງໝົດ 15 ບ້ານ, ປະກອບມີຄົວເຮືອນທັງໝົດ 1.061 ຄົວເຮືອນ, ຄົວເຮືອນທຸກຍາກມີ 845 ຄົວເຮືອນ, ມີພົນລະເມືອງທັງໝົດ 4.812 ຄົນ, ຍິງ 2.357 ຄົນ ໂດຍໄດ້ຈັດຕັ້ງປະຕິບັດກິດຈະກໍາປັບປຸງຊີວິດການເປັນຢູ່, ສົ່ງເສີມໂພຊະນາການ, ແລະ ການກໍ່ສ້າງພື້ນຖານໂຄງລ່າງຂະໜາດນ້ອຍ 11 ໂຄງການ ມີມູນຄ່າທັງໝົດ 1.5 ຕື້ກີບ ໃນນັ້ນ ຊຸມຊົນປະກອບສ່ວນລວມເປັນເງິນທັງໝົດ 130 ລ້ານກວ່າກີບ. ພ້ອມດຽວກັນນັ້ນ, ກໍໄດ້ແນະນໍາກ່ຽວກັບໂຄງການ ທລຍ 3 ທີ່ຈະຈັດຕັ້ງປະຕິບັດຢູ່ບ້ານເປົ້າໝາຍຊຸດທີ 2 ນັບແຕ່ປີ 2022-2024. ບ້ານເປົ້າໝາຍຊຸດທີ 2 ຢູ່ເມືອງກວັນປະກອບມີ 22 ບ້ານ ຄື: ບ້ານສິບກັງ, ບ້ານພຽງໂພ, ບ້ານສັນໂຮມ, ບ້ານສິບສານ, ບ້ານແກ້ງກໍ້, ບ້ານຫ້ວຍເຮັງ, ບ້ານວິຊ້າຍ, ບ້ານນໍ້າປາດ, ບ້ານປ່າຂົມ (ໂຮມພັນ), ບ້ານຫ້ວຍຈີນ, ບ້ານຍອດປ້າວ, ບ້ານສັນຄູນ, ບ້ານທ່າຄວາຍ, ບ້ານສຸມລວງ, ບ້ານໜອງແທວນ, ບ້ານລ້ອງກວ້າງ, ບ້ານຫ້ວຍອັງ, ບ້ານປ່າກ່າ, ບ້ານເມືອງກວັນ, ບ້ານນາໜັງ, ບ້ານ ຫ້ວຍສະມັດ ແລະ ບ້ານປຸງຖາກ.